United Nations Development Programme

PRESS RELEASE

Empowered lives.
Resilient nations.

# ອິດສະຕຣາລີ ສະໜັບສະໜັບການເກັບກູ້ລະເບີດບໍ່ທັນແຕກໃນເຂດທີ່ຖືກນໍ້າຖ້ວມ ຢູ່ແຂວງອັດຕະປື

**ທີ່ວຽງຈັນ, 12 ທັນວາ 2018** – ລັດຖະບານແຫ່ງອິດສະຕຣາລີ ໄດ້ລົງນາມໃນຂໍ້ຕົກລົງກັບອົງການສະຫະປະຊາຊາດ ເພື່ອການພັດທະນາ (ອົງການຢູເອັນດີພີ) ຢ່າງເປັນທາງການມື້ນີ້ ກ່ຽວກັບການເກັບກູ້ລະເບີດບໍ່ທັນແຕກ ຢູ່ເມືອງສະໜາມໄຊ ເພື່ອແນໃສ່ຮັບປະກັນຄວາມປອດໄພໃຫ້ແກ່ຊຸມຊົນທີ່ຖືກຍົກຍ້າຍຖິ່ນຖານ ຍ້ອນໄພນໍ້າຖ້ວມເມືອບໍ່ດົນມານີ້.

ປະເທດອິດສະຕຣາລີ ປະກອບສ່ວນ 200,000 ໂດລາອິດສະຕຣາລີ ໃຫ້ແກ່ລັດຖະບານແຫ່ງ ສປປ ລາວ ໂດຍຜ່ານອົງການສະຫະປະຊາຊາດ ເພື່ອການພັດທະນາ ເພື່ອດຳເນີນການເກັບກູ້ລະເບີດບໍ່ທັນແຕກ ຢູ່ເມືອງສະໜາມໄຊ, ແຂວງອັດຕະປື. ການປະກອບສ່ວນນີ້ ແມ່ນສ່ວນໜຶ່ງຂອງການຊ່ວຍເຫຼືອດ້ານມະນຸດສະທຳ ຂອງອິດສະຕຣາລີ ໃນຈຳນວນ 3 ລ້ານໂດລາ ເພື່ອໃຫ້ການສະໜັບສະໜຸນລັດຖະບານໃນການຕອບໂຕ້ກັບ ໄພນໍ້າຖ້ວມ ຢູ່ແຂວງອັດຕະປື ພາຍຫຼັງເກີດການຮອຍແຕກແຫງຂອງເຂື່ອນເຊປຽນ-ເຊນໍ້ານ້ອຍ ໃນເດືອນກໍລະກົດທີ່ຜ່ານມາຂອງປີນີ້.

ການຈັດຕັ້ງປະຕິບັດໂຄງການດັ່ງກ່າວໂດຍໂຄງການເກັບກູ້ລະເບີດແຫ່ງຊາດ ໂດຍການປະສານງານ ແລະ ການຈັດການຂອງອົງການ ສະຫະປະຊາຊາດ ເພື່ອການພັດທະນາ ແລະ ການສະໜັບສະໜຸນດ້ານການເງິນຈາກ ລັດຖະບານແຫ່ງອິດສະຕຣາລີ ໄດ້ເລີ່ມຂຶ້ນທັນທີ ຫຼັງຈາກເກີດຜົນກະທົບຈາກນໍ້າຖ້ວມໃນເຂດທີ່ມີລະເບີດບໍ່ທັນແຕກຕົກຄ້າງ. 94 ສ່ວນຮ້ອຍຂອງບ້ານຕ່າງໆ ທີ່ຢູ່ແຂວງອັດຕະປື ເຊິ່ງເປັນແຂວງທີ່ຕັ້ງຢູ່ພາກໃຕ້ຂອງ ສປປ ລາວ ແມ່ນມີລະເບີດບໍ່ທັນແຕກຕົກຄ້າງ. ປະລິມານນໍ້າມະຫາສານ ແລະ ຂີ້ຕົມ ພາຍຫຼັງທີ່ເກີດນໍ້າຖ້ວມສຸ ອາດຈະພັດເອົາລະເບີດບໍ່ທັນແຕກໄປສູ່ພື້ນທີ່ອື່ນ. ຕາມການຮ້ອງຂໍຂອງເຈົ້າແຂວງ ແຂວງອັດຕະປື ທັນທີຫຼັງເກີດນໍ້າຖ້ວມສຸ, ໂຄງການເກັບກູ້ລະເບີດແຫ່ງຊາດໄດ້ຈັດທີມງານເກັບກູ້ລະເບີດ ກຽມພ້ອມ ສໍາລັບເມືອງສະໜາມໄຊ.

ຈາກຜົນການຮ່ວມມືລະຫວ່າງອົງການສະຫະປະຊາຊາດ ເພື່ອການພັດທະນາ ແລະ ລັດຖະບານແຫ່ງອິດສະຕຣາລີ, ໂຄງການເກັບກູ້ ລະເບີດແຫ່ງຊາດ ໄດ້ຈັດວຽກງານການສຳຫຼວດ ແລະ ການເກັບກູ້ລະເບີດບໍ່ທັນແຕກ ໂດຍໄວຢູ່ແຂວງອັດຕະປື ເປັນວຽກບູລິມະສິດ, ໄດ້ນຳເອົາທີມງານເກັບກູ້ລະເບີດຂອງໂຄງການ ຈາກແຂວງໃກ້ຄຽງຄືແຂວງຈຳປາສັກ, ສາລະວັນ ແລະ ສະຫວັນນະເຂດ ແລະ ໄດ້ແບ່ງພວກເຂົາອອກເປັນ 5 ທີມເພື່ອໄປເຮັດວຽກຢູ່ເມືອງສະໜາມໄຊ. ຕັ້ງແຕ່ກາງເດືອນກັນຍາເປັນຕົ້ນມາ, ເນື້ອທີ່ດິນ 44 ເຮັກຕາ ຂອງ 2 ບ້ານຢູ່ເມືອງສະໜາມໄຊ ໄດ້ຮັບການກວດກູ້ລະເບີດບໍ່ທັນແຕກ ເຊິ່ງພົບລະເບີດລູກຫວ່ານ 16 ໜ່ວຍ ແລະ ລະເບີດປະເພດອື່ນອີກ 18 ປະເພດ ເຊິ່ງຊີ້ໃຫ້ເຫັນວ່າ ຍັງມີລະເບີດບໍ່ທັນແຕກຢູ່ໃນພື້ນທີ່ດັ່ງກ່າວ ແລະ ເປັນອັນຕະລາຍຕໍ່ປະຊາຊົນ. ທີມງານເກັບກູ້ 5 ທີມເຫຼົ່ານີ້ ຕັ້ງເປົ້າໝາຍຈະບັນລຸການສຳຫຼວດ ແລະ ການເກັບກູ້ໃຫ້ໄດ້ 57 ເຮັກຕາ.

ນອກຈາກການສຳຫຼວດ ແລະ ການເກັບກູ້ແລ້ວ, ໂຄງການເກັບກູ້ລະເບີດແຫ່ງຊາດ ຍັງໄດ້ຈັດໂຄສະນາສຶກສາຄວາມສ່ຽງ. ການສຳຫຼວດທັນທີ ແລະ ກິດຈະກຳປູກຈິດສຳນຶກເພີ່ມຕື່ມໃຫ້ຊຸມຊົນ ເປັນສິ່ງຈຳເປັນ ເພື່ອແນໃສ່ຮັບປະກັນຄວາມປອດໄພຂອງຊຸມຊົນ ເວລາທີ່ພວກເຂົາກັບມາບ້ານຂອງພວກເຂົາ ຫຼື ຍ້າຍຖິ່ນຖານຫຼັງຈາກນ້ຳຖ້ວມ. ການສຳຫຼວດໃນທົ່ວແຂວງກ່ອນໜ້າທີ່ຈະເກີດນ້ຳຖ້ວມ ເຊິ່ງຍັງເຮັດໃຫ້ບໍ່ທັນສຳເລັດນັ້ນ ພົບວ່າ ຢ່າງໜ້ອຍ 12,225 ເຮັກຕາ ເປັນພື້ນທີ່ອັນຕະລາຍທີ່ໄດ້ຮັບການຢັ້ງຢືນ ແລ້ວ ເຊິ່ງຕ້ອງໄດ້ຮັບການເກັບກູ້ອອກໃຫ້ໝົດ.

ໃນພິທີລົງນາມ, ທ່ານ ຈີນ-ເບີນາດ ຄາຣາສໂຊ, ເອກອັກຄະລັດຖະທູດອິດສະຕຣາລີ ປະຈຳ ສປປ ລາວ ໄດ້ກ່າວວ່າ: “ຄວາມຈຳເປັນທີ່ຈະຕ້ອງໄດ້ປະເມີນຄືນສະຖານະການລະເບີດບໍ່ທັນແຕກຢູ່ແຂວງອັດຕະປື ເປັນສິ່ງສຳຄັນຫຼາຍ ເພື່ອຮັບປະກັນວ່າ ປະຊາຊົນທີ່ໄດ້ຮັບຜົນກະທົບສາມາດເຂົ້າເຖິງທີ່ດິນທີ່ປອດໄພສຳລັບການດຳລົງຊີວິດ ພ້ອມກັບໄດ້ຮັບການສະໜັບສະໜູນທີ່ສຳຄັນ. ການສະໜັບສະໜູນຂອງອົດສະຕຣາລີຕໍ່ໂຄງການເກັບກູ້ລະເບີດແຫ່ງຊາດຢູ່ແຂວງອັດຕະປື ແມ່ນສືບຕໍ່ຈາກການລົງທຶນຂອງພວກເຮົາໃນຫຼາຍປີ ໃນການຊ່ວຍເຫຼືອລັດຖະບານ ໃນການຕໍ່ສູ້ກັບສິ່ງທ້າທາຍດ້ານລະເບີດບໍ່ທັນແຕກ ແລະ ບັນລຸເປົ້າໝາຍການພັດທະນາແບບຍືນຍົງ ທີ 18 ”

ທ່ານ ນາງ ຄາຣິນາ ອິມໂມເນັນ, ຜູ້ປະສານງານອົງການສະຫະປະຊາຊາດ ແລະ ທັງເປັນຜູ້ຕາງໜ້າອົງການສະຫະປະຊາຊາດເພື່ອການພັດທະນາປະຈຳ ສປປ ລາວ ໄດ້ກ່າວວ່າ: “ອົງການສະຫະປະຊາຊາດ ເພື່ອການພັດທະນາ ຍັງມີຄວາມມຸ້ງໝັ້ນທີ່ຈະໃຫ້ການຊ່ວຍເຫຼືອ ເພື່ອການບັນລຸເປົ້າໝາຍ ການພັດທະນາແບບຍືນຍົງ ທີ 18 ກ່ຽວກັບການຮັກສາຊີວິດໃຫ້ປອດໄພຈາກລະເບີດບໍ່ທັນແຕກ. ແຜນງານລະເບີດບໍ່ທັນແຕກ ຂອງພວກເຮົາ ໃຫ້ການສະໜັບສະໜູນດ້ານ ການສຳຫຼວດ, ການເກັບກູ້, ການໂຄສະນາສຶກສາຄວາມສ່ຽງ, ການຊ່ວຍເຫຼືອ ຜູ້ຖືກເຄາະຮ້າຍ ແລະ ການປະສານງານ. ພວກເຮົາມີຄວາມຍິນດີເປັນຢ່າງຍິ່ງທີ່ພວກເຮົາ ສາມາດໃຫ້ການຊ່ວຍເຫຼືອແຂວງ ອັດຕະປື ແລະ ແຂວງອື່ນໆໃນທົ່ວປະເທດໃນວຽກງານການເກັບກູ້ລະເບີດບໍ່ທັນແຕກ ໂດຍສະເພາະຫຼັງຈາກເກີດ ເຫດການໄພພິບັດນ້ຳຖ້ວມ.”

ໂຄງການນີ້ ເປັນຕົວຢ່າງທີ່ສຳຄັນໃນວຽກງານການຟື້ນຟູເບື້ອງຕົ້ນທີ່ມີປະສິດທິພາບສູງ ຫຼັງເກີດໄພພິບັດຄັ້ງໃຫຍ່ ເຊິ່ງຜູ້ໃຫ້ທຶນ ແລະ ຄູ່ຮ່ວມພັດທະນາ ເຮັດວຽກຢ່າງໃກ້ຊິດກັບລັດຖະບານ ເພື່ອແນໃສ່ຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງແຫ່ງຊາດ ທີ 18 ຄື: *ຊີວິດທີ່ປອດໄພຈາກລະເບີດບໍ່ທັນແຕກ.*

**ສຳລັບຂໍ້ມູນເພີ່ມຕື່ມ, ກະລຸນາຕິດຕໍ່:**

*ທ່ານ ນາງ ອີດີໂກ ຮາໂມສ-ໂຊໂລ, ຜູ້ຊ່ຽວຊານດ້ານການສື່ສານ, ອົງການສະຫະປະຊາຊາດ ປະຈຳ ສປປ ລາວ, ໂທ +856 021 267 778, ມືຖື: +856 020 7717 7913 ອີເມວ: ildikohamos@oneun.org*
*ທ່ານ ສົມລິດ ຄູນປະເສີດ, ຜູ້ຊ່ວຍດ້ານການສື່ສານ, ອົງການສະຫະປະຊາຊາດ ເພື່ອການພັດທະນາ, ໂທ: 020 777 118 74, ອີເມວ: somlith.khounpaseuth@undp.org*